ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຕລຊລ ສ້າງນັກວິຊາຊີບທຸລະກິດຫຼັກຊັບ ມືອາຊີບ




ຕະຫຼາດຫຼັກຊັບລາວ (ຕລຊລ) ໄດ້ສຸມໃສ່ສ້າງນັກວິຊາຊີບທຸລະກິດຫຼັກຊັບລາວ ມືອາຊີບ ໂດຍໄດ້ເຝິກອົບຮົມຫຼັກສູດ ນັກວິຊາຊີບທຸລະກິດຫຼັກຊັບລາວ ປະເພດນາຍໜ້າຊື້-ຂາຍຫຼັກຊັບໃຫ້ 41 ຄົນ ຜ່ານທາງອອນລາຍ ຊຶ່ງຈັດຂຶ້ນໃນວັນທີ 30 ຕຸລາ 2021 ຈະໃຊ້ເວລາ 6 ວັນ ແລະເສັງ 1 ວັນ (ວັນເສົາ-ວັນອາທິດ) ທີ່ອາຄານ ຕລຊລ ແລະມີນັກເຝິກອົບຮົມຈາກ ຕລຊລ, ສຳນັກງານຄຸ້ມຄອງຫຼັກຊັບ (ສຄຄຊ), BCEL-KT, ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ບໍລິສັດຫຼັກຊັບ ລາວຈີນ ຈຳກັດ, ພາກສ່ວນທະນາຄານ, ພະນັກງານ, ນັກສຶກສາເຂົ້າຮ່ວມ ຊຶ່ງໃນຜ່ານມາໄລຍະທີ່ເລີ່ມຕົ້ນຂອງຕະຫຼາດ, ຕລຊລ ຮ່ວມມືກັບຕະຫຼາດຫຼັກຊັບໄທ ໄດ້ຈັດຫຼັກສູດ CMIP I ແລະCMIP II ສຳລັບນາຍໜ້າຊື້-ຂາຍຫຼັກຊັບ ແລະນັກວິເຄາະຫຼັກຊັບ; ຕໍ່ມາ ຕລຊລ ຮ່ວມກັບພາກສ່ວນກ່ຽວຂ້ອງ ໄດ້ສ້າງຫຼັກສູດຂຶ້ນເອງທີ່ຊື່ວ່າ LA-PIB ສຳລັບນາຍໜ້າຊື້-ຂາຍຫຼັກຊັບ ທີ່ເຄີຍຈັດເຝິກອົບຮົມມາແລ້ວ 5 ລຸ້ນ (ນັບແຕ່ປີ 2014 ຫາ2017) ມີຜູ້ເຂົ້າຮ່ວມຫຼາຍຮ້ອຍ

ຄືນ; ຜ່ານການຖອດຖອນບົດຮຽນ ຈຶ່ງໄດ້ປັບປຸງຫຼັກສູດດັ່ງກ່າວມາເປັນ LSPP: Lao Securities Professional Program ນີ້ຂຶ້ນ.



ການເຝິກອົບຮົມຫຼັກສູດນີ້ ເພື່ອເສີມສ້າງຄວາມຮູ້ ແລະຄວາມເຂົ້າໃຈ ກ່ຽວກັບພາບລວມ ຂອງຕະຫຼາດທຶນ ໂດຍສະເພາະວຽກງານນາຍໜ້າຊື້-ຂາຍຫຼັກຊັບ, ການວິເຄາະຂໍ້ມູນທາງການເງິນ, ເຄື່ອງມືເພື່ອວິເຄາະການລົງທຶນ, ການບໍລິຫານກຸ່ມຫຼັກຊັບ ແລະການປະເມີນມູນຄ່າຫຼັກຊັບ, ກົດໝາຍວ່າດ້ວຍຫຼັກຊັບ, ລະບຽບການ ທີ່ກ່ຽວຂ້ອງ, ພ້ອມທັງຈັນຍາບັນທີ່ຕິດພັນກັບວຽກງານນາຍໜ້າຊື້-ຂາຍຫຼັກຊັບໃຫ້ແກ່ບຸກຄະລາກອນຂອງບັນດາບໍລິສັດ, ຜູ້ຄຸ້ມຄອງ, ຕະຫຼາດຫຼັກຊັບ ແລະຜູ້ທີ່ມີສ່ວນຮ່ວມໃນຕະຫຼາດທຶນ ແລະບຸກຄົນທີ່ມີຄວາມສົນໃຈໃນຫຼັກສູດນີ້; ຫຼັກສູດດັ່ງກ່າວ ໄດ້ມີບັນ ດານັກວິທະຍາກອນທີ່ຊ່ຽວຊານຈາກ ຕລຊລ,  ສຄຄຊ, ບັນດາບໍລິສັດຫຼັກຊັບທັງ 3 ແຫ່ງໂດຍປະກອບມີ 3 ພາກໃຫຍ່ ຄື: ພາກວິຊາສະເພາະຫຼັກຊັບ, ພາກຈັນຍາບັນ, ພາກກົດໝາຍ ແລະລະບຽບການຄວບຄູ່; ພ້ອມນັ້ນ, ນັກເຝິກອົບຮົມ ທີ່ເຂົ້າຮ່ວມຮຽນຄົບຕາມເງື່ອນໄຂແລະເສັງຜ່ານຫຼັກສູດດັ່ງກ່າວຈະໄດ້ຮັບໃບປະກາດການເຝິກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັບຊັບລາວ ປະເພດນາຍໜ້າຊື້-ຂາຍຫຼັກຊັບ ເພື່ອເປັນການຢັ້ງຢືນ ແລະສາມາດນຳໄປປະກອບອາຊີບຕໍ່ໄປ.

ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການໃຫຍ່ ຕລຊລ ໄດ້ກ່າວວ່າ: ການກໍ່ສ້າງນັກວິຊາຊີບທຸລະກິດຫຼັກຊັບ ແມ່ນມີຄວາມໝາຍຄວາມສຳຄັນ ສຳລັບວຽກງານຕະຫຼາດທຶນ; ສຳລັບບໍລິສັດຫຼັກຊັບ ເນື່ອງຈາກນັກວິຊາຊີບທຸລະກິດຫຼັກຊັບ ຈະເປັນຫົວຈັກຂັບເຄື່ອນການໃຫ້ບໍລິການແກ່ນັກລົງທຶນຢ່າງມືອາຊີບ ແລະມີຈັນຍາບັນສູງ ເພື່ອສ້າງພາບພົດ ທີ່ດີໃຫ້ແກ່ລະບົບຕະຫຼາດທຶນລາວ. ຖ້າພະນັກງານຂອງບໍລິສັດຫຼັກຊັບ ຫຼື ພະນັກງານ ສຄຄຊ ຫຼື ພະນັກງານຂອງ ຕລຊລ ບໍ່ໄດ້ຜ່ານຫຼັກສູດນີ້ກໍ່ປຽບເໝືອນຄົນຂັບລົດ ທີ່ບໍ່ຮູ້ກົດຈາລະຈອນ ຊຶ່ງສາມາດຂັບລົດໄດ້, ແຕ່ຂັບລົດ

ແບບບໍ່ມີຫຼັກການ ເຊິ່ງສາມາດເກີດອຸບັດຕິເຫດໄດ້ທຸກເວລາ, ນອກຈາກນີ້ສຳລັບທ່ານທີ່ເຂົ້າຮ່ວມ ແຕ່ບໍ່ໄດ້ເຮັດວຽກໃນຂົງເຂດວຽກງານຕະຫຼາດທຶນໂດຍກົງ ກໍ່ຈະຊ່ວຍໃຫ້ທ່ານສາມາດເຂົ້າໃຈວຽກງານຫຼັກຊັບກໍ່ຄືວຽກງານຕະຫຼາດທຶນຫຼາຍຂຶ້ນ ເພື່ອເປັນກອບປ້ອງກັນຄວາມສ່ຽງ ທີ່ແຂງແຮງໃນເສັ້ນທາງການລົງທຶນຂອງທ່ານໃນອະນາຄົດ; ຂໍຮຽກຮ້ອງໃຫ້ນັກເຝິກອົບຮົມຈົ່ງເຊີດຊູຄວາມຮັບຜິດຊອບສູງ ແລະຮັບຜົນສຳເລັດ ຕາມລຳດັບຄາດໝາຍ.

# ຂ່າວໂດຍ: ຣັດສະໝີ ດວງສັດຈະ